# ພາລະບົດບາດ

| | |
|---|---|
| **ຕຳແໜ່ງ** | ຫົວໜ້າທີມງານເມືອງ |
| **ຈຳນວນຕຳແໜ່ງ** | 14 |
| **ບ່ອນປະຈຳການ** | ຫ້ອງການໂຄງການປະຈຳເມືອງ, ໂດຍມີການໄປຢ້ຽມຢາມບັນດາບ້ານເປົ້າໝາຍເປັນປະຈຳ |
| **ຜູ້ຊີ້ນຳ** | ຜູ້ອຳນວຍການ |
| **ທີ່ປຶກສາດ້ານວິຊາການ** | ບັນດາຫົວໜ້າສາຍງານ |
| **ໄລຍະເວລາສັນຍາ** | ສັນຍາເປັນປີ, ຕໍ່ສັນຍາໄດ້ ພາຍໃຕ້ເງື່ອນໄຂຄວາມຕ້ອງການຂອງໂຄງການ, ງົບປະມານ, ແລະ ການທົບທວນຜົນງານປະຈຳປີ |

## ກ. ສະພາບລວມກ່ຽວກັບໂຄງການ

ການປັບປຸງຊີວິດການເປັນຢູ່ຂອງຊາວຊົນນະບົດ ຂອງ ສປປ ລາວ ແມ່ນປັດໃຈສຳຄັນເພື່ອກ້າວໄປສູ່ ການຫຼຸດຜ່ອນຄວາມທຸກຍາກແບບຍືນຍົງ ໃນເຂດເນີນສູງຂອງ ສປປ ລາວ. ໃນຂະນະທີ່ ປະມານ 2/3 ຂອງປະຊາກອນຂອງປະເທດ ອາໄສຢູ່ໃນເຂດຊົນນະບົດ, ພວກເຂົາເຈົ້າ ກວມເອົາ 88% ຂອງຜູ້ທຸກຍາກ. ເກືອບທັງໝົດຂອງຜູ້ທຸກຍາກ ແມ່ນຄົວເຮືອນກະສິກຳ. ປະມານເຄິ່ງຫນຶ່ງຂອງຄົວເຮືອນກະສິກຳທີ່ທຸກຍາກ (ຫຼື 41% ຂອງຈຳນວນຜູ້ທຸກຍາກ) ດຳລົງຊີວິດຢູ່ໃນເຂດຫ່າງໄກສອກຫຼີກ, ສ່ວນຫຼາຍແມ່ນຢູ່ໃນເຂດເນີນສູງ; ມີພຽງແຕ່ 64% ຂອງກຸ່ມນີ້ ອາໄສຢູ່ໃນບ້ານທີ່ມີເສັ້ນທາງເຂົ້າເຖິງໄດ້ທຸກສະພາບອາກາດ. ດ້ວຍເຫດດນີ້, ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປສຊ) ເປັນໂຄງການພັດທະນາທີ່ນຳໃຊ້ຮູບແບບການພັດທະນາໂດຍຊຸມຊົນເປັນເຈົ້າ, ມີຈຸດປະສົງເພື່ອປັບປຸງຊີວິດການເປັນຢູ່ໃນເຂດຊົນນະບົດ ແລະ ການບໍລິໂພກອາຫານທີ່ມີຄວາມຫຼາກຫຼາຍສຳລັບຊຸມຊົນທຸກຍາກໃນພື້ນທີ່ເປົ້າໝາຍໂຄງການ, ພ້ອມທັງຕອບສະໜອງທັນທີ ແລະ ມີປະສິດທິຜົນໃນກໍລະນີເກີດວິກິດການ ຫຼື ເຫດການສຸກເສີນ. ໂຄງການດັ່ງກ່າວ ໄດ້ວາງເປົ້າໝາຍໃສ່ຊຸມຊົນທີ່ດ້ອຍໂອກາດໃນ ສປປ ລາວ ໃນ 7 ແຂວງ ຄື: ຫົວພັນ, ອຸດົມໄຊ, ຜົ້ງສາລີ, ຊຽງຂວາງ, ສາລະວັນ, ສະຫວັນນະເຂດ ແລະ ເຊກອງ. ນອກຈາກນັ້ນ, ໂຄງການ ປສຊ ແມ່ນສ່ວນໜຶ່ງຂອງວິທີການຫຼາຍຂະແໜງການຮ່ວມກັນຈັດຕັ້ງປະຕິບັດເພື່ອແກ້ໄຂບັນຫາດ້ານໂພຊະນາການ ແນໃສ່ຫຼຸດຜ່ອນບັນຫາເດັກຂາດໂພຊະນາການ ໃຫ້ເຫຼືອ ພຽງ 25% ໃນປີ 2025.

ໂຄງການປະກອບມີ 5 ອົງປະກອບ ຄື:

**ອົງປະກອບ 1: ການພັດທະນາເສດຖະກິດທ້ອງຖິ່ນ, ປັບປຸງໂຄງລ່າງ ແລະ ການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ (27.6 ລ້ານໂດລາສະຫາລັດ).** ອົງປະກອບນີ້ ສະໜັບສະໜູນ ກິດຈະກຳທີ່ຈັດຕັ້ງປະຕິບັດຢູ່ໃນລະດັບຊຸມຊົນທັງຫມົດຂອງບ້ານ. ບັນດາກິດຈະກຳ ຈະເສີມສ້າງຄວາມສາມາດຂອງຊຸມຊົນ ເພື່ອຈັດລຽງບູລິມະສິດຄວາມຕ້ອງການລະດັບບ້ານ ທີ່ທົນທານຕໍ່ສະພາບອາກາດ ແລະ ການລົງທຶນໃສ່ພື້ນຖານໂຄງລ່າງຂະໜາດນ້ອຍທີ່ກ່ຽວຂ້ອງ ແລະ ການດຳເນີນງານ ແລະ ການບຳລຸງຮັກສາ (O&M). ທັງໝົດນີ້ ຈະເນັ້ນໃສ່ສົ່ງເສີມການມີສ່ວນຮ່ວມຂອງສະມາຊິກໃນຊຸມຊົນ ໂດຍສະເພາະຄວາມຕ້ອງການຂອງແມ່ຍິງ, ທຸກກຸ່ມຊົນເຜົ່າ ແລະ ກຸ່ມທີ່ມີຄວາມສ່ຽງ. ຈະໃຫ້ບູລິມະສິດແກ່ບັນດາຄວາມຕ້ອງການທີ່ຈະແກ້ໄຂອຸປະສັກຕໍ່ກັບຄວາມໝັ້ນຄົງດ້ານສະບຽງອາຫານ, ການປັບປຸງໂພຊະນາການ, ແລະ/ຫຼື ການສ້າງລາຍຮັບ ໂດຍການມີສ່ວຮ່ວມຂອງກຸ່ມເຫຼົ່ານັ້ນ. ການອອກແບບ, ການດຳເນີນງານ ແລະ ການບຳລຸງຮັກສາ ພື້ນຖານໂຄງລ່າງຂະໜາດນ້ອຍ ຈະລວມເອົາລັກສະນະທີ່ມີການປ່ອຍທາດກາກບອນຕ່ຳ, ທົນທານຕໍ່ສະພາບອາກາດ ເຊັ່ນ: ການປະຕິບັດງານ, ຄວາມທົນທານ, ແລະ ຄວາມປອດໄພ.

**ອົງປະກອບ 2: ການສ້າງຄວາມອາດສາມາດໃນວຽກງານປັບປຸງຊີວິດການເປັນຢູ່ (7.95 ລ້ານໂດລາສະຫາລັດ).** ອົງປະກອບນີ້ສະຫນັບສະຫນູນກິດຈະກຳລະດັບກຸ່ມທີ່ສົ່ງເສີມການສ້າງລາຍຮັບ. ກຸ່ມຈະໄດ້ປັບຕົວເຂົ້າກັບສະພາບເສດຖະກິດ-ສັງຄົມ ແລະ

ສະພາບອາກາດຂອງບ້ານ. ຢູ່ໃນບ້ານປະເພດ II ແລະ ປະເພດ III, ໂຄງການ ປສຊ ຈະສະໜັບສະໜູນກຸ່ມທ້ອນເງິນ ແລະ ສິນເຊື່ອ, ສ່ວນຫຼາຍແມ່ນແມ່ຍິງ, ການສ້າງຄວາມຮູ້ດ້ານການເງິນ, ແລະ ກິດຈະກຳການສ້າງລາຍຮັບທີ່ມີຄວາມຫຼາກຫຼາຍ ທົນທານຕໍ່ສະພາບອາກາດ. ໃນບາງບ້ານປະເພດ III ທີ່ມີທ່າແຮງດ້ານການຕະຫຼາດ, ໂຄງການ ຈະສະໜັບສະໜູນ ແລະ ການສ້າງຄວາມອາດສາມາດຂອງກຸ່ມຜະລິດ ທີ່ມີຢູ່ແລ້ວ ແລະ ຜູ້ສະໜອງປັດໃຈການຜະລິດກະສິກຳທີ່ທົນທານຕໍ່ສະພາບອາກາດ. ໃນບ້ານປະເພດ I ທີ່ມີຄວາມສາມາດໃນການພັດທະນາວຽກງານທ້ອນເງິນ ແລະ ສິນເຊື່ອ ຈຳກັດ ຍ້ອນສະມາຊິກໃນກຸ່ມສ່ວນໃຫຍ່ ທັງຍິງ ແລະ ຊາຍ ມີສະພາບຄວາມທຸກຍາກກວ່າ, ກຸ່ມເຫຼົ່ານີ້ ຈະເນັ້ນໃສ່ການຜະລິດສະບຽງອາຫານໃຫ້ພຽງພໍໃນການບໍລິໂພກ ແລະ ການສ້າງລາຍຮັບ.

**ອົງປະກອບ 3: ການສົ່ງເສີມການເຂົ້າເຖິງໂພຊະນາການຂອງຊຸມຊົນ (4.75 ລ້ານໂດລາສະຫາລັດ).** ອົງປະກອບນີ້ ສະໜັບສະໜູນການປັບປຸງການບໍລິໂພກອາຫານ (ທັງດ້ານຄຸນນະພາບ ແລະ ປະລິມານ) ຂອງແມ່ ແລະ ເດັກ ອາຍຸ 1.000 ວັນທຳອິດ ໂດຍການສົ່ງເສີມການປະຕິບັດດ້ານໂພຊະນາການທີ່ດີ. ອົງປະກອບນີ້ ແມ່ນອີງໃສ່ 5 ຫຼັກການ ຄື: (ກ) ການນຳສະເໜີການບໍລິໂພກອາຫານທີ່ປຸງແຕ່ງພາຍໃນບ້ານທີ່ປະຫຍັດເວລາ, (ຂ) ການປະກອບສ່ວນຂອງຊຸມຊົນ, (ຄ) ການສ້າງແຮງຈູງໃຈອີງໃສ່ຜົນໄດ້ຮັບ ສຳລັບຊາວບ້ານທີ່ຈັດຕັ້ງປະຕິບັດໄດ້ດີ, (ງ) ການເສີມສ້າງຄວາມເຂັ້ມແຂງຂອງໄວໜຸ່ມ ແລະ ສື່ສັງຄົມ ແລະ ການເພີ່ມແຫຼ່ງອາຫານໃນຂັ້ນທ້ອງຖິ່ນໃຫ້ຫຼາຍຂຶ້ນ. ຄວາມທົນທານຂອງຊຸມຊົນ ຈະຖືກເສີມສ້າງ ໂດຍການປະສົມປະສານລະຫວ່າງ ອາຫານຈາກການຜະລິດຂອງຄົວເຮືອນ, ການຊື້ອາຫານ ແລະ ການເກັບອາຫານຈາກປ່າ. ແຫຼ່ງສະບຽງອາຫານ ຈະໄດ້ຮັບກາສົ່ງເສີມ, ເປັນຕົ້ນແມ່ນ ເຂດຜະລິດ ເຊັ່ນ: ສວນຄົວ, ຮົ້ວສວນ, ເຂດປູກເຂົ້າເນີນສູງ, ທົ່ງນາ, ປະເພດພືດ ແລະ ສູດອາຫານຕ່າງໆ, ຈະຖືກດັດປັບໃຫ້ແທດເໝາະກັບສະພາບນິເວດກະສິກຳ ແລະ ວັດທະນະທຳຂອງຊຸມຊົນ.

**ອົງປະກອບ 4: ວຽກງານຄຸ້ມຄອງບໍລິຫານ, ການສ້າງຄວາມເຂັ້ມແຂງ, ຕິດຕາມ ແລະ ປະເມີນຜົນ (4.7 ລ້ານໂດລາສະຫາລັດ).** ອົງປະກອບນີ້ ໃຫ້ການຊ່ວຍເຫຼືອດ້ານວິຊາການ ແລະ ການດຳເນີນງານ ສຳລັບການຄຸ້ມຄອງໂຄງການໃນແຕ່ລະຈຳວັນ ແລະ ລະບົບການຕິດຕາມ ແລະ ການປະເມີນຜົນ. ຊຶ່ງກວມເອົາການຈ້າງ, ການຝຶກອົບຮົມ, ແລະ ການໃຫ້ຄ່າຕອບແທນແກ່ພະນັກງານ ຢູ່ຂັ້ນສູນກາງ ແລະ ຂັ້ນເມືອງ ລວມທັງ ຄ່າໃຊ້ຈ່າຍຂອງຜູ້ອຳນວຍຄວາມສະດວກຂັ້ນບ້ານ; ອຸປະກອນທີ່ກ່ຽວຂ້ອງ ແລະ ຄ່າໃຊ້ຈ່າຍໃນການດຳເນີນງານ; ແລະ ການບັນຊີ, ການຈັດຊື້ຈັດຈ້າງ, ການຄຸ້ມຄອງທາງດ້ານການເງິນ, ການຄວບຄຸມພາຍໃນ, ການກວດສອບ, ການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ, ການຕິດຕາມ-ປະເມີນຜົນ, ແລະ ການສະໜັບສະໜູນດ້ານອື່ນໆ.

**ອົງປະກອບ 5: ນະໂຍບາຍການແກ້ໄຂໄພພິບັດສຸກເສີນ (0 ໂດລາສະຫາລັດ).** ໃນເບື້ອງຕົ້ນ ອົງປະກອບນີ້ ຈະບໍ່ມີການຈັດສັນງົບປະມານໄວ້ລ່ວງໜ້າ ແຕ່ຈະມີການຈັດສັນງົບປະມານມາຈາກອົງປະກອບອື່ນ ເພື່ອຕອບສະໜອງຢ່າງຮີບດ່ວນກັບວິກິດການ ຫຼື ເຫດການສຸກເສີນ ທີ່ລັດຖະບານ ປະກາດເປັນໄພພິບັດລະດັບຊາດ ທີ່ອາດຈະເກີດຂຶ້ນ ໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ. ທັງສາມປະເພດບ້ານ ແມ່ນເງື່ອນໄຂເທົ່າທຽມກັນທີ່ຈະໄດ້ຮັບການສະໜັບສະໜູນ ໃນເວລາເກີດເຫດການໄພພິບັດ. ກິດຈະກຳຂອງອົງປະກອບນີ້ ຈະອີງໃສ່ຍຸດທະສາດການຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ ຂອງ ສປປ ລາວ.

## ຂ. ບົດບາດໂດຍລວມ

ຫ້ອງການທີມງານເມືອງ ຈະເຮັດໜ້າທີ່ເປັນຜູ້ລາຍງານ ໃຫ້ອົງການປົກຄອງຂັ້ນແຂວງ ກໍຄື ທ່ານຮອງເຈົ້າແຂວງ ໃນນາມຜູ້ຊີ້ນຳໂຄງການ ປສຊ ຂັ້ນແຂວງ, ທ່ານຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ ໃນນາມຜູ້ປະສານງານໂຄງການ ປສຊ ຝ່າຍລັດຂັ້ນແຂວງ, ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ ໄດ້ຮັບຊາບກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຢູ່ບັນດາເມືອງ ແລະ ບ້ານ ເປົ້າໝາຍ ພ້ອມທັງ ບັນຫາສຳຄັນ ແລະ ຂໍ້ຄົງຄ້າງທີ່ອາດຈະເກີດຂຶ້ນ ໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ ເພື່ອຈະໄດ້ໃຫ້ການຊີ້ນຳທີ່ຖືກຕ້ອງ ແລະ ເໝາະສົມ.

ຕໍາແໜ່ງນີ້ ຈະຮັບຜິດຊອບອໍານວຍຄວາມສະດວກ, ສັງລວມ ແລະ ສົ່ງຕໍ່ບົດລາຍງານຄວາມຄືບໜ້າ ແລະ ຂໍ້ມູນທີ່ຕ້ອງການໃຫ້ຫ້ອງການໂຄງການ ຂັ້ນສູນກາງ ຫຼື ທີມງານຄຸ້ມຄອງໂຄງການ (PMT) ຢູ່ນະຄອນຫຼວງວຽງຈັນ. ຫົວໜ້າທີມງານເມືອງ ຍັງຈະໄດ້ປະສານງານກັບພາກສ່ວນຕ່າງໆ ຂອງແຂວງ. ຫົວໜ້າທີມງານເມືອງ ຈະປະຈໍາຢູ່ເມືອງທີ່ລາວຮັບຜິດຊອບ.

ຫົວໜ້າທີມງານເມືອງ ມີໜ້າທີ່ຮັບຜິດຊອບຊີ້ນໍາ, ປະສານງານ, ຕິດຕາມ ແລະ ປະເມີນຜົນ (ລວມທັງ ການສ້າງຄວາມອາດສາມາດ, ການກວດສອບຢັ້ງຢືນຂໍ້ມູນ, ການຂຽນບົດລາຍງານ ແລະ ອື່ນໆ) ແລະ ຊີ້ນໍາທຸກວຽກງານຂອງໂຄງການ ປສຊ ທີ່ຈັດຕັ້ງປະຕິບັດຢູ່ໃນເມືອງ, ໂດຍສຸມໃສ່ຊີ້ນໍາພະນັກງານຂັ້ນບ້ານ (YGs) ແລະ ກິດຈະກໍາຕິດຕາມ ແລະ ປະເມີນຜົນ ເພື່ອຮັບປະກັນປະສິດທິຜົນຂອງການເຮັດວຽກຂອງພະນັກງານໂຄງການ ປສຊ ທີ່ປະຈໍາຢູ່ເມືອງດັ່ງກ່າວ ແລະ ກິດຈະກໍາຕ່າງໆລວມທັງວຽກງານດ້ານການເງິນ, ໂພຊະນາການ, ປັບປຸງຊີວິດການເປັນຢູ່, ແລະ ວິສະວະກໍາ. ຫົວໜ້າທີມງານເມືອງ ຈະຕ້ອງຮັບປະກັນວ່າ ກິດຈະກໍາຂອງໂຄງການ ປສຊ ໄດ້ຖືກຈັດຕັ້ງປະຕິບັດ, ໄດ້ຮັບການຕິດຕາມ ແລະ ລາຍງານ ໂດຍສອດຄ່ອງກັບຄູ່ມືການຈັດຕັ້ງປະຕິບັດໂຄງການ (PIM) ແລະ ຄໍາແນະນໍາດ້ານວິຊາການທີ່ກ່ຽວຂ້ອງ. ຫົວໜ້າທີມງານເມືອງ ຄາດວ່າຈະໃຊ້ເວລາຢ່າງໜ້ອຍ 30% ຂອງເວລາການເຮັດວຽກຂອງລາວ ຢູ່ພາກສະໜາມ ເພື່ອໃຫ້ການສະໜັບສະໜູນກິດຈະກໍາຕິດຕາມແລະ ປະເມີນຜົນ.

## ຄ. ໜ້າທີ່ ແລະ ຄວາມຮັບຜິດຊອບ

1. ລາຍງານ ໃຫ້ອົງການປົກຄອງແຂວງ ລວມທັງ ອົງການທີ່ກ່ຽວຂ້ອງຂັ້ນແຂວງ ໂດຍສະເພາະ ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ພະແນກແຜນການ ແລະ ການລົງທຶນແຂວງ ແລະ ພະແນກການອື່ນໆຂອງແຂວງ ທີ່ມີສ່ວນກ່ຽວຂ້ອງກັບການຊີ້ນໍາໂຄງການ, ການສະໜັບສະໜູນ ແລະ ການຊີ້ນໍາດ້ານຍຸດທະສາດ ຮັບຊາບກ່ຽວການຈັດຕັ້ງປະຕິບັດໂຄງການ;
2. ສ້າງ ແລະ ຮັກສາສາຍພົວພັນອັນດີກັບອົງການປົກຄອງແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ;
3. ຮັກສາການຕິດຕໍ່ສື່ສານ ແລະ ແບ່ງປັນຂໍ້ມູນ-ຂ່າວສານ ກັບອົງການປົກຄອງແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ;
4. ຕາງໜ້າໂຄງການ ປສຊ ໃນການເຂົ້າຮ່ວມກອງປະຊຸມຂັ້ນແຂວງ ທີ່ກ່ຽວຂ້ອງກັບໂຄງການ;
5. ດໍາເນີນການຝຶກອົບຮົມປົກກະຕິ ແລະ ການຝຶກອົບຮົມທວນຄືນ ໃຫ້ແກ່ພະນັກງານຂັ້ນບ້ານ (YGs) ກ່ຽວກັບຄວາມຕ້ອງການຂອງການລາຍງານ ແລະ ການນໍາໃຊ້ແບບຟອມ Kobo Toolbox ສໍາລັບການລາຍງານ;
6. ຕິດຕໍ່ພົວພັນກັບຫົວໜ້າຕິດຕາມ ແລະ ປະເມີນຜົນ ຂັ້ນສູນກາງ ແລະ ຜູ້ຊ່ຽວຊານດ້ານຖານຂໍ້ມູນ MIS ໃນກໍລະນີມີບັນຫາກ່ຽວກັບການລາຍງານ (ຄວາມລ່າຊ້າ ແລະ ອື່ນໆ) ແລະ ຄວາມຜິດພາດທາງດ້ານວິຊາການກ່ຽວກັບ Kobo Toolbox ຫຼື ຖານຂໍ້ມູນ MIS;
7. ກວດສອບຂໍ້ມູນທີ່ເອົາເຂົ້າໃນ Kobo Toolbox ໂດຍພະນັກງານຂັ້ນບ້ານ (YGs) ໂດຍການຮ່ວມມືກັບພະນັກງານວິສະວະກອນ, ປັບປຸງຊີວິດການເປັນຢູ່, ແລະ ໂພຊະນາການ ຂັ້ນເມືອງ ເພື່ອຮັບປະກັນວ່າ ຂໍ້ມູນໄດ້ຄຸນນະພາບ ແລ້ວຈຶ່ງສົ່ງຕໍ່ໃຫ້ທີມງານໂຄງການ ປສຊ ຂັ້ນສູນກາງ;
8. ດໍາເນີນການກວດສອບຂໍ້ມູນເປັນປະຈໍາ ຢູ່ພາກສະໜາມ ໂດຍການຮ່ວມມືກັບພະນັກງານວິສະວະກອນ, ປັບປຸງຊີວິດການເປັນຢູ່, ແລະ ໂພຊະນາການ ຂັ້ນເມືອງ;
9. ເອົາຂໍ້ມູນເຂົ້າໃນຖານ MIS ຫຼື Kobo Toolbox (ອີງຕາມຄວາມຕ້ອງການ ຫຼື ການຮ້ອງຂໍຈາກທີມງານໂຄງການ ຂັ້ນສູນກາງ);
10. ເກັບກໍາຂໍ້ມູນພາກສະໜາມ (ຕາມຄວາມຕ້ອງການ) ສໍາລັບການປະເມີນຄຸນນະພາບ ແລະ ເກັບກໍາການຈັດຕັ້ງປະຕິບັດທີ່ດີທີ່ສຸດ (ຮູບພາບ ແລະ ວິດີໂອ);
11. ນໍາໃຊ້ຂໍ້ມູນທີ່ເກັບກໍາໂດຍພະນັກງານຂັ້ນບ້ານ (YGs) ແລະ ພະນັກງານວິສະວະກອນເມືອງ ສໍາລັບການຕັດສິນໃຈໃນການປະຕິບັດ ແລະ ການກໍານົດບັນຫາ ແລະ ການປະຕິບັດທີ່ດີທີ່ສຸດ;
12. ແບ່ງປັນຂໍ້ມູນ-ຂ່າວສານ ແລະ ບົດຮຽນໃນການຈັດຕັ້ງປະຕິບັດໂຄງການ ກັບພາກສ່ວນກ່ຽວຂ້ອງຂັ້ນແຂວງ;

13. ກະກຽມ, ກວດກາຄືນ ແລະ ສັງລວມ ແຜນການເຄື່ອນໄຫວວຽກງານປະຈໍາປີ ແລະ ປະຈໍາເດືອນ ເພື່ອສະເໜີຕໍ່ຫ້ອງການໂຄງການ ຢູ່ນະຄອນຫຼວງວຽງຈັນ ຕາມທີ່ກໍານົດໄວ້ໃນຄູ່ມືການຈັດຕັ້ງປະຕິບັດໂຄງການ (PIM);
14. ກະກຽມບົດລາຍງານ ປະຈໍາເດືອນ, ປະຈໍາງວດ ແລະ ປະຈໍາປີ ແລະ ສົ່ງໃຫ້ຫ້ອງການໂຄງການ ຢູ່ນະຄອນຫຼວງວຽງຈັນ ຕາມທີ່ກໍານົດໄວ້ໃນຄູ່ມືການຈັດຕັ້ງປະຕິບັດໂຄງການ (PIM);
15. ຕິດຕາມ ແລະ ແນະນໍາດ້ານວິຊາການ ໃນການຈັດຕັ້ງປະຕິບັດວຽກງານໂຄງການ ໂດຍການຮ່ວມມືກັບພະນັກງານວິສະວະກອນ, ປັບປຸງຊີວິດການເປັນຢູ່, ແລະ ໂພຊະນາການ ຂັ້ນເມືອງ;
16. ຊີ້ນໍາການປະຕິບັດໜ້າທີ່ຂອງພະນັກງານ ຂັ້ນເມືອງ;
17. ໃນຂອບເຂດຄວາມຮັບຜິດຊອບ, ສົ່ງເສີມ ແລະ ອະທິບາຍ ຫຼັກການ ແລະ ຂະບວນການຈັດຕັ້ງປະຕິບັດ ຂອງໂຄງການ ປສຊ ໃຫ້ແກ່ພາກສ່ວນລັດຖະບານ, ຜູ້ໃຫ້ທຶນ, ພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການທີ່ບໍ່ແມ່ນລັດຖະບານ;
18. ປະຕິບັດວຽກງານອື່ນໆ ຕາມການຮຽກຮ້ອງຂອງຜູ້ຊີ້ນໍາ, ຕາມຄວາມຕ້ອງການຂອງໂຄງການ.

## ງ. ເງື່ອນໄຂຂອງຜູ້ສະໝັກ

1. ຈົບຊັ້ນສູງ ສາຂາບໍລິຫານທຸລະກິດ, ບໍລິຫານໂຄງການ, ວິທະຍາສາດສັງຄົມ, ເສດຖະສາດ, ການສຶກສາພັດທະນາ ຫຼື ສາຂາອື່ນທີ່ກ່ຽວຂ້ອງ;
2. ມີປະສົບການຢ່າງໜ້ອຍ 2 ປີ ດ້ານການຄຸ້ມຄອງທີ່ກ່ຽວຂ້ອງ ຢູ່ເຂດຊົນນະບົດ, ການຕິດຕາມ ແລະ ປະເມີນຜົນ, ການສ້າງຄວາມສາມາດ ແລະ ການວິເຄາະຂໍ້ມູນ ແລະ ການຂຽນບົດລາຍງານ;
3. ມີຄວາມເຂົ້າໃຈດີກ່ຽວກັບການດໍາເນີນໂຄງການຊ່ວຍເຫຼືອຂອງລັດຖະບານ ແລະ ຕ່າງປະເທດ;
4. ມີທັກສະການສື່ສານທາງສັງຄົມທີ່ດີ ແລະ ມີປະສົບການເຮັດວຽກກັບອົງການປົກຄອງທ້ອງຖິ່ນ, ແມ່ຍິງ ແລະ ຊົນເຜົ່າ;
5. ສະແດງໃຫ້ເຫັນຄວາມຮູ້ໃນການວາງແຜນ, ການກໍານົດ ແລະ ຈັດບຸລິມະສິດ ແລະ ການຄຸ້ມຄອງວຽກງານ;
6. ມີປະສົບການໃນການປະຕິບັດໂຄງການ/ແຜນງານຊ່ວຍເຫຼືອ ຂອງລັດຖະບານ ແລະ ສາກົນ ໂດຍສະເພາະແມ່ນໂຄງການທີ່ກ່ຽວຂ້ອງກັບການພັດທະນາຊົນນະບົດ;
7. ມີປະສົບການເຮັດວຽກກັບຊຸມຊົນທຸກຍາກ ຢູ່ເຂດຊົນນະບົດ ຫ່າງໄກສອກຫຼີກ;
8. ມີຄວາມສາມາດໃນການເຮັດວຽກດ້ວຍຕົນເອງ, ຢູ່ໃນກອບຄວາມຕ້ອງການຂອງໂຄງການ;
9. ມີທັກສະທາງດ້ານຄອມພິວເຕີ;
10. ມີຄວາມຕັ້ງໃຈໃນການເຮັດວຽກ ແລະ ສາມາດເດີນທາງໄປເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ.